**ຕົວຢ່າງ,** ໜ້ານີ້ສຳລັບການອ້າງອີງເທົ່ານັ້ນ

Employment Development Department
State of California

**ວັນທີສົ່ງຈົດໝາຍ:**
**[ຊື່ຕົ້ນ ແລະ ນາມສະກຸນຂອງຜູ້ຍື່ນຄຳຮ້ອງ]**
**ວັນທີເລີ່ມຕົ້ນຂອງປີຜົນປະໂຫຍດ:**
**ສຳລັບຫ້ອງການນຳໃຊ້ເທົ່ານັ້ນ:**

EMPLOYMENT DEVELOPMENT DEPARTMENT
PO BOX 1234
ANY TOWN, CA 99999-9999

# ໜັງສືແຈ້ງການກ່ຽວກັບການແຈ້ງຂໍ້ຄວາມເທັດທີ່ອາດຈະເປັນໄປໄດ້

**ຍ້ອນຫຍັງຂ້າພະເຈົ້າຈຶ່ງໄດ້ຮັບໜັງສືແຈ້ງການສະບັບນີ້?**

ທ່ານໄດ້ຮັບໜັງສືແຈ້ງການສະບັບນີ້ເພາະວ່າຂໍ້ມູນທີ່ທາງພະແນກ EDD ມີລະບຸວ່າທ່ານອາດຈະໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃຫ້ຂໍ້ມູນທີ່ບໍ່ຄົບຖ້ວນກັບທາງ EDD ເຊິ່ງເປັນຂໍ້ມູນກ່ຽວກັບບັນຫາດ້ານສິດໃນການໄດ້ຮັບຄວາມຊ່ວຍເຫຼືອທີ່ອາດຈະເປັນໄປໄດ້ ທີ່ອາດຈະມີການສົນທະນາກັນ ໃນລະຫວ່າງການສຳພາດທາງໂທລະສັບຕາມກຳນົດນັດໝາຍຂອງທ່ານ.

ເພື່ອຊ່ວຍໃຫ້ທ່ານກະກຽມສຳລັບການສຳພາດນີ້ ຂ້າງລຸ່ມແມ່ນຄຳຖາມທີ່ທາງ EDD ອາດຈະຖາມທ່ານ.
ຄຳຕອບທີ່ທ່ານສະໜອງໃຫ້ຈະຊ່ວຍໃຫ້ທາງ EDD ກຳນົດວ່າທ່ານໄດ້ຮູ້ ຫຼືຄວນຈະໄດ້ຮູ້ວ່າຂໍ້ມູນທີ່ທ່ານສະໜອງໃຫ້ EDD ບໍ່ຖືກຕ້ອງ ຫຼື ທ່ານໃຫ້ຂໍ້ມູນບໍ່ຄົບຖ້ວນໂດຍເຈດຕະນາເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານຫຼືບໍ່.

**ຖ້າທາງ EDD ຕັດສິນວ່າຂ້າພະເຈົ້າແຈ້ງຂໍ້ຄວາມເທັດ ບົດລົງໂທດແມ່ນຫຍັງ?**

ຖ້າທາງ EDD ພົບວ່າທ່ານເຈດຕະນາແລະຮູ້ວ່າໄດ້ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃຫ້ຂໍ້ມູນບໍ່ຄົບຖ້ວນເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອ ທ່ານຈະໄດ້ຮັບການລົງໂທດຖານໃຫ້ "ຂໍ້ມູນທີ່ເປັນເທັດ" 2 ເຖິງ 23 ອາທິດ.
ອາທິດທີ່ເປັນການລົງໂທດເຫຼົ່ານີ້ຈະຖືກເພີ່ມເຕີມໃສ່ໃນການຮຽກຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານຂອງທ່ານໃນປັດຈຸບັນແລະໃນອະນາຄົດ.
ໃນແຕ່ລະອາທິດທີ່ມີການລົງໂທດ ທ່ານຕ້ອງຫວ່າງງານເຕັມເວລາ ຫຼື ບໍ່ເຕັມເວລາ, ສົ່ງໃບຢັ້ງຢືນ ແລະມີຄຸນສົມບັດຄົບຕາມຂໍ້ກຳນົດທຸກຂໍ້ ແຕ່ທ່ານຈະບໍ່ໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານສຳລັບອາທິດເຫຼົ່ານັ້ນ.
ນອກຈາກນັ້ນທ່ານຍັງອາດຈະຕ້ອງຈ່າຍຄືນເງິນຊ່ວຍເຫຼືອທີ່ໄດ້ຮັບກ່ອນໜ້ານັ້ນ ແລະຈ່າຍຄ່າປັບໄໝເປັນເງິນເທົ່າກັບ 30% ຂອງຈຳນວນເງິນເກີນທັງໝົດທີ່ທ່ານໄດ້ຮັບ.

**ຂ້າພະເຈົ້າສາມາດຕອບຄຳຖາມເຫຼົ່ານີ້ເປັນລາຍລັກອັກສອນໄດ້ບໍ?**

ຖ້າທ່ານຕ້ອງການຕອບຄຳຖາມເຫຼົ່ານີ້ເປັນລາຍລັກອັກສອນກ່ຽວກັບການແຈ້ງຂໍ້ຄວາມເທັດຂອງທ່ານທີ່ອາດຈະເປັນໄປໄດ້ ແທນການຕອບຄຳຖາມໃນລະຫວ່າງການສຳພາດທາງໂທລະສັບ ທ່ານອາດຈະສາມາດຕອບຄຳຖາມຂ້າງລຸ່ມ, ລົງຊື່ແລະວັນທີໃນໜັງສືແຈ້ງການສະບັບນີ້ ແລະສົ່ງຄືນທາງໄປສະນີໄປຫາທີ່ຢູ່ຂ້າງເທິງນີ້**ພາຍໃນ 10 ມື້** ນັບຈາກວັນທີໃນ*ໜັງສືແຈ້ງການກ່ຽວກັບການສຳພາດເລື່ອງການມີສິດໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານ (Notification of Unemployment Insurance Benefits Eligibility Interview)*.

ເຖິງແມ່ນວ່າທ່ານຈະເລືອກຕອບຄຳຖາມເຫຼົ່ານີ້ເປັນລາຍລັກອັກສອນ ທ່ານຍັງຈະຕ້ອງຫວ່າງພ້ອມສຳລັບການສຳພາດທາງໂທລະສັບຕາມກຳນົດໃນວັນທີແລະເວລາທີ່ລະບຸໃນ*ໜັງສືແຈ້ງການກ່ຽວກັບການສຳພາດເລື່ອງການມີສິດໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານ* ເພື່ອສົນທະນາກັນກ່ຽວກັບບັນຫາອື່ນດ້ານການມີສິດໄດ້ຮັບເງິນຊ່ວຍເຫຼືອທີ່ເປັນໄປໄດ້ທີ່ສະແດງຢູ່ໃນໜັງສືແຈ້ງການ. ນອກຈາກນີ້ ທາງ EDD ອາດຈະຕິດຕໍ່ຫາທ່ານເພື່ອຂໍຄຳຊີ້ແຈງໃຫ້ເຂົ້າໃຈແຈ່ມແຈ້ງກ່ຽວກັບຄຳຕອບທີ່ທ່ານສະໜອງໃຫ້ຢູ່ໃນໜັງສືແຈ້ງການສະບັບນີ້.

**ຖ້າທ່ານຕ້ອງການຕອບເປັນລາຍລັກອັກສອນ ກະລຸນາຕອບຄຳຖາມຕໍ່ໄປນີ້ໃຫ້ຄົບຖ້ວນທີ່ສຸດເທົ່າທີ່ຈະເປັນໄປໄດ້:**

1. ທ່ານໄດ້ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໄດ້ໃຫ້ຂໍ້ມູນທີ່ບໍ່ຄົບຖ້ວນກັບທາງ EDD ບໍ? ☐ ແມ່ນ ☐ ບໍ່ແມ່ນ
2. ຖ້າທ່ານໄດ້ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ທ່ານຮູ້ບໍວ່າທ່ານໄດ້ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງກັບ EDD ໃນເວລາທີ່ທ່ານໃຫ້ຂໍ້ມູນນັ້ນ? ☐ ແມ່ນ ☐ ບໍ່ແມ່ນ
3. ຖ້າທ່ານໄດ້ໃຫ້ຂໍ້ມູນທີ່ບໍ່ຄົບຖ້ວນ ທ່ານຮູ້ບໍວ່າທ່ານຄວນຈະໃຫ້ຂໍ້ມູນນັ້ນກັບ EDD ໃນເວລາທີ່ທ່ານໃຫ້ຂໍ້ມູນນັ້ນ? ☐ ແມ່ນ ☐ ບໍ່ແມ່ນ
4. ຖ້າທ່ານພົບວ່າຂໍ້ມູນທີ່ທ່ານໃຫ້ໄວ້ແມ່ນບໍ່ຖືກຕ້ອງ ທ່ານໄດ້ພະຍາຍາມທີ່ຈະແຈ້ງໃຫ້ທາງ EDD ຮູ້ບໍ? ☐ ແມ່ນ ☐ ບໍ່ແມ່ນ
5. ຖ້າທ່ານຕອບວ່າແມ່ນໃນຄຳຖາມຂໍ້ 1 ຍ້ອນຫຍັງທ່ານຈຶ່ງໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃຫ້ຂໍ້ມູນທີ່ບໍ່ຄົບຖ້ວນນັ້ນ?
   ____________________________________________
6. ທ່ານມີຂໍ້ມູນອື່ນໃດເພີ່ມເຕີມບໍ? ____________________________________________
   ____________________________________________

**ຂ້າພະເຈົ້າເຂົ້າໃຈວ່າກົດໝາຍຂອງລັດກຳນົດໃຫ້ມີບົດລົງໂທດດ້ານການເງິນ ແລະຕັດສິດໃນການໄດ້ຮັບຄວາມຊ່ວຍເຫຼືອເປັນອາທິດຖ້າຂ້າພະເຈົ້າແຈ້ງຂໍ້ຄວາມເທັດໂດຍເຈດຕະນາ ຫຼື ແຈ້ງຂໍ້ມູນຂໍ້ເທັດຈິງທີ່ບໍ່ຄົບຖ້ວນເພື່ອໃຫ້ໄດ້ຮັບຄວາມຊ່ວຍເຫຼືອ.**

**ຂ້າພະເຈົ້າຂໍຢັ້ງຢືນພາຍໃຕ້ບົດລົງໂທດຂອງການໃຫ້ການເທັດວ່າ ຂໍ້ເທັດຈິງທີ່ຂ້າພະເຈົ້າໃຫ້ໄວ້ນີ້ແມ່ນເປັນຄວາມຈິງແລະຖືກຕ້ອງ.**

| ______________________ | ______________________ | ______________________ |
|---|---|---|
| **ລາຍເຊັນ** | **ຂຽນຊື່ເປັນຕົວບັນຈົງ** | **ວັນທີ** |